British Embassy
Vientiane

**ວັນຈັນ, ທີ 2 ກຸມພາ 2015**

## ສະຫະລາຊະອານາຈັກອັງກິດ ຮ່ວມກັບກະຊວງປ້ອງກັນຄວາມສະຫງົບ ໄດ້ເສີມສ້າງຂີດຄວາມສາມາດກ່ຽວກັບການຕ້ານການຟອກເງິນ

**ສະຖານທູດອັງກິດ ແລະ ກະຊວງປ້ອງກັນຄວາມສະຫງົບ ໄດ້ຮ່ວມຈັດຊຸດຝຶກອົບຮົມ ໃນການສ້າງຂີດຄວາມສາມາດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ໃນການສືບສວນຄະດີກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.**

ສະຖານທູດອັງກິດທີ່ວຽງຈັນ ແລະ ກະຊວງປ້ອງກັນຄວາມສະຫງົບໄດ້ຮ່ວມກັນເປັນເຈົ້າພາບຈັດກອງປະຊຸມສຳມະນາ ເພື່ອເສີມສ້າງຂີດຄວາມສາມາດໃນການສືບສວນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຊິ່ງຈະຈັດຂຶ້ນເປັນເວລາ 5 ວັນ ເລີ່ມແຕ່ວັນທີ 2-6 ກຸມພາ 2015 ທີ່ໂຮງແຮມເມີຄຽວ, ນະຄອນຫຼວງວຽງຈັນ.

ກອງປະຊຸມສຳມະນາດັ່ງກ່າວ ນຳພາໂດຍຜູ້ຊ່ຽວຊານຈາກໜ່ວຍງານອາດສະຍາກຳແຫ່ງຊາດຂອງສະຫະລາຊະອານາຈັກ ແລະ ສຳນັກງານສະຫະປະຊາຊາດ ວ່າດ້ວຍຢາເສບຕິດ ແລະ ອາສະຍາກຳ (UNODC), ເນື້ອໃນຂອງການຝຶກອົບຮົມມະນາແມ່ນໄດ້ເນັ້ນໜັກໃສ່ ເຕັກນິກໃນການສືບສວນ-ສອບສວນເພື່ອປ້ອງກັນ ແລະ ປາບປາມອາສະຍາກຳຟອກເງິນໃນລາວ. ຫລັກສູການຝຶກອົບຮົມຄັ້ງນີ້ ຈະໄດ້ມອບໃຫ້ແກ່ບັນດາໜ່ວຍງານທີ່ກ່ຽວຂ້ອງ ແລະ ວິທະຍາຄານຕຳຫລວດ ຂອງກະຊວງປ້ອງກັນຄວາມສະຫງົບ ສປປ ລາວ. ເປົ້າໝາຍກໍ່ເພື່ອນຳເອົາຫຼັກສູດ ເຕັກນິກໃນການສືບສວນ-ສອບສວນ ຄະດີການຕ້ານການຟອກເງິນ ແລະ ການສະໜອງທຶນໃກ້ແກ່ການກໍ່ການຮ້າຍ ເຂົ້າໃນການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດໃນອານາຄົດ.

ຜູ້ເຂົ້າຮ່ວມຊຸດຝຶກອົບຮົມ ແມ່ນບັນດາເຈົ້າໜ້າທີ່ຈາກບັນດາກົມກ່ຽວຂ້ອງ ແລະ ວິທະຍາຄານຕຳຫລວດ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ. ຊຸດຝຶກອົບຮົມດັ່ງກ່າວ ຈະຊ່ວຍໃຫ້ລາວ ສາມາປະຕິບັດຕາມຄາແນະນາຂອງໜ່ວຍງານສະເພາະກິດປະຕິບັດການທາງການເງິນ (FATF) ໂດຍການເພີ່ມທະວີຂີດຄວາມສາມາດໃນການສືບສວນ-ສອບສວນ ໃນດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການຝຶກອົບຮົມດັ່ງກ່າວເປັນ ສ່ວນໜຶ່ງຂອງການຊ່ວຍເຫຼືອຈາກລັດຖະບານແຫ່ງລາຊະອານາຈັກອັງກິດ ໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ໃນດ້ານການຕ້ານການຟອກເງິນ.
ໂຄງການດັ່ງກ່າວ ເປັນໜຶ່ງໃນຈຸດປະສົງຫລັກຂອງລັດຖະບານອັງກິດໃນການຮ່ວມງານກັບບັນດາພາກສ່ວນຕ່າງໆ ເພື່ອເປັນການຊຸກຍູ້ ໃນການປັບປຸງສະພາບແວດລ້ອມທາງການດຳເນີນທຸລະກິດຢູ່ ລາວ ທີ່ອີງໃສ່ຫຼັກແຫ່ງກົດໝາຍຂອງລະບົບເສດຖະກິດສາກົນ.